ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ
ຄະນະໂຄສະນາອົບຮົມສູນກາງພັກ

ເລກທີ 700/ຄອສພ

ນະຄອນຫຼວງວຽງຈັນ, ວັນທີ 10 ພຶດສະພາ 2024

# ຄຳແນະນຳ
## ກ່ຽວກັບການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິ ວ່າດ້ວຍການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່

ເຖິງ: ຄະນະພັກບັນດາກະຊວງ, ອົງການທຽບເທົ່າ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດ, ອົງການຈັດຕັ້ງມະຫາຊົນອ້ອມຂ້າງສູນກາງ, ຄະນະໂຄສະນາອົບຮົມນະຄອນຫຼວງວຽງຈັນ, ຄະນະໂຄສະນາອົບຮົມແຂວງ, ນະຄອນ, ເມືອງ.

- ອີງຕາມ ມະຕິຕົກລົງຂອງກົມການເມືອງສູນກາງພັກ ສະບັບເລກທີ 20/ກມສພ, ລົງວັນທີ 13 ຕຸລາ 2022 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະໂຄສະນາອົບຮົມສູນກາງພັກ.
- ອີງຕາມ ມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 04/ກມສພ, ລົງວັນທີ 11 ເມສາ 2024 ວ່າດ້ວຍການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່ ແລະ ເພື່ອເປັນການຍູ້ແຮງການຜັນຂະຫຍາຍແນວທາງປ່ຽນແປງໃໝ່ສູ່ລວງເລິກ, ສ້າງການຫັນປ່ຽນແຂງແຮງ, ເລິກເຊິ່ງ, ຮອບດ້ານ ໃນການນຳພາຂອງພັກ.

ເພື່ອເຮັດໃຫ້ການເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິ ຂອງກົມການເມືອງສູນກາງພັກ ວ່າດ້ວຍການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່ ໃຫ້ແກ່ສະມາຊິກພັກ, ພະນັກງານ ແລະ ປະຊາຊົນ, ຊັ້ນຄົນຕ່າງໆ ໃຫ້ຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ ເຮັດໃຫ້ການຈັດຕັ້ງປະຕິບັດໄດ້ຮັບຜົນດີ, ຄະນະໂຄສະນາອົບຮົມສູນກາງພັກ ອອກຄຳແນະນຳບາງບັນຫາ ດັ່ງນີ້:

### I. ຈຸດປະສົງ-ລະດັບຄາດໝາຍ.

1. ເພື່ອເຮັດໃຫ້ຄະນະພັກແຕ່ລະຂັ້ນ, ສະມາຊິກພັກ, ພະນັກງານ ແລະ ປະຊາຊົນ, ຊັ້ນຄົນຕ່າງໆຮັບຮູ້-ເຂົ້າໃຈ, ເຊື່ອມຊຶມ ແລະ ກຳແໜ້ນ ຢ່າງເລິກເຊິ່ງ ກ່ຽວກັບການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ແລະ ຄວາມເປັນເຈົ້າໃນການປະຕິບັດພັນທະ, ໜ້າທີ່ ຂອງແຕ່ລະພາກສ່ວນຢ່າງທົ່ວເຖິງ.

2. ເພື່ອເປັນການສ້າງບາດກ້າວບຸກທະລຸໃນການພັດທະນາ, ຮັບປະກັນໃຫ້ແກ່ການເຕີບໂຕ ທາງດ້ານເສດຖະກິດດ້ວຍຈັງຫວະທີ່ໝັ້ນທ່ຽງ ແລະ ຕໍ່ເນື່ອງ ຮັບປະກັນການພັດທະນາແບບຍືນຍົງ ຕາມທິດສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່ ເຊິ່ງຈະເປັນເງື່ອນໄຂພື້ນຖານຮັບປະກັນການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ກໍຄື ການພັດທະນາເສດຖະກິດຕະຫຼາດ ຕາມທິດສັງຄົມນິຍົມ ຢູ່ປະເທດເຮົາ

ໃຫ້ນັບມື້ເປັນຮູບປະທຳຍິ່ງຂຶ້ນ ດ້ວຍຈິດໃຈບຸກທະລຸ ຍົກສູງຄວາມຮັບຜິດຊອບ ຂອງຄະນະພັກແຕ່ລະຂັ້ນ ສ້າງຄວາມຢູ່ດີກິນດີ ໃຫ້ປະຊາຊົນ ພາຍໃນຊາດ ເຮັດໃຫ້ປະເທດຊາດມີສະຖຽນລະພາບທາງດ້ານການເມືອງ ແລະ ມີຄວາມໝັ້ນຄົງຢ່າງໜັກແໜ້ນ.

3. ບົນພື້ນຖານຄວາມຮັບຮູ້, ເຂົ້າໃຈດັ່ງກ່າວນັ້ນ ເພື່ອແນໃສ່ການແກ້ໄຂບັນຫາຕົວຈິງຂອງພັກ, ຂອງຊາດ ໃຫ້ມີການຫັນປ່ຽນຢ່າງຈະແຈ້ງ, ແຂງແຮງກວ່າເກົ່າ, ເພື່ອສ້າງຄວາມເຊື່ອໝັ້ນຢ່າງໜັກແໜ້ນ ຕໍ່ການນຳພາຂອງພັກ, ການຄຸ້ມຄອງ-ບໍລິຫານຂອງລັດ ໃນການສືບຕໍ່ນຳພາປະເທດຊາດໃຫ້ຫຼຸດພົ້ນອອກຈາກຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ສະຖານະພາບດ້ອຍພັດທະນາ, ສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນໃຫ້ສົມບູນຍິ່ງຂຶ້ນ.

**II. ເນື້ອໃນ ແລະ ວິທີການເຊື່ອມຊຶມ, ຜັນຂະຫຍາຍ.**

**1. ເນື້ອໃນເຊື່ອມຊຶມ, ຜັນຂະຫຍາຍ.**

ເນື້ອໃນມະຕິ ຂອງກົມການເມືອງສູນກາງພັກ ສະບັບເລກທີ 04/ກມສພ, ລົງວັນທີ 11 ເມສາ 2024 ວ່າດ້ວຍການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່. ແຕ່ໃນນີ້ຕ້ອງຄັດຈ້ອນເອົາເນື້ອໃນຂອງມະຕິ ມາອະທິບາຍ, ຊີ້ແຈ້ງ ຢ່າງເລິກເຊິ່ງ ເປັນຕົ້ນແມ່ນ:

①. ແນວຄິດຊີ້ນຳການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ.

②. ທິດທາງລວມ.

③. ແຜນການປັບປຸງໃນຕໍ່ໜ້າ (ແຜນນະໂຍບາຍລວມ).

④. ການຈັດຕັ້ງປະຕິບັດ ແລະ ມອບຄວາມຮັບຜິດຊອບ.

**2. ວິທີການເຊື່ອມຊຶມ, ຜັນຂະຫຍາຍ.**

ໃຫ້ຄະນະພັກບັນດາກະຊວງ, ອົງການທຽບເທົ່າ ອ້ອມຂ້າງສູນກາງ, ຄະນະໂຄສະນາອົບຮົມນະຄອນຫຼວງວຽງຈັນ, ຄະນະໂຄສະນາອົບຮົມແຂວງ ແລະ ຄະນະໂຄສະນາອົບຮົມນະຄອນ, ເມືອງ ຈັດຕັ້ງການເຜີຍແຜ່, ເຊື່ອມຊຶມ ມະຕິວ່າດ້ວຍການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່ ດັ່ງນີ້:

**1). ຂັ້ນກະຊວງ, ອົງການທຽບເທົ່າ ອ້ອມຂ້າງສູນກາງ.**

- ຈັດຕັ້ງເຊື່ອມຊຶມໃຫ້ພະນັກງານການນຳຫຼັກແຫຼ່ງ: ຄະນະປະຈຳພັກ, ຄະນະບໍລິຫານງານພັກ, ຫົວໜ້າກົມ, ຮອງຫົວໜ້າກົມ, ຫົວໜ້າພະແນກ ແລະ ຮອງຫົວໜ້າພະແນກ ຂອງກະຊວງ, ອົງການ.

- ເຊື່ອມຊຶມໃຫ້ບັນດາສະມາຊິກພັກ, ພະນັກງານ, ລັດຖະກອນ ທົ່ວໄປ.

✳ ສຳລັບຜູ້ເຜີຍແຜ່ ແມ່ນສະຫາຍເລຂາ ຫຼື ຮອງເລຂາຄະນະບໍລິຫານງານພັກກະຊວງ, ອົງການທຽບເທົ່າ ເປັນຜູ້ຮັບຜິດຊອບໂດຍກົງ.

**2). ຂັ້ນແຂວງ, ນະຄອນຫຼວງ, ນະຄອນ, ເມືອງ.**

- ຈັດຕັ້ງເຊື່ອມຊຶມໃຫ້ການນຳຫຼັກແຫຼ່ງ: ຄະນະປະຈຳພັກ, ຄະນະບໍລິຫານງານພັກ, ຫົວໜ້າພະແນກການ ຂັ້ນແຂວງ, ນະຄອນຫຼວງວຽງຈັນ, ເມືອງ, ນະຄອນ.

✳ ສຳລັບຜູ້ເຜີຍແຜ່ ແມ່ນສະຫາຍເລຂາຄະນະພັກແຂວງ, ນະຄອນຫຼວງວຽງຈັນ ເປັນຜູ້ຮັບຜິດຊອບ.

- ຈັດຕັ້ງເຊື່ອມຊຶມໃຫ້ຄະນະພັກ, ພະນັກງານຫຼັກແຫຼ່ງ, ເລຂາຄະນະພັກຮາກຖານ ແລະ ເລຂາໜ່ວຍພັກ (ອ້ອມຂ້າງເມືອງ, ກຸ່ມບ້ານ ແລະ ບ້ານ) ໂດຍມອບໃຫ້ສະຫາຍເລຂາຄະນະພັກຮາກຖານ ຫຼື ຫົວໜ້າພະແນກ

ການອົບຮົມຂ້າງແຂວງ, ນະຄອນຫຼວງວຽງຈັນ; ສະຫາຍເລຂາຄະນະພັກເມືອງ, ນະຄອນ ເປັນຜູ້ນໍາພາ-ຊີ້ນໍາຈັດຕັ້ງເຊື່ອມຊຶມຢູ່ຂັ້ນຂອງຕົນ.

* ສໍາລັບຜູ້ເຜີຍແຜ່ ແມ່ນສະຫາຍເລຂາພັກ ຫຼື ຫົວໜ້າພະແນກການ ເປັນຜູ້ຮັບຜິດຊອບ.

**3. ກໍານົດເວລາເຊື່ອມຊຶມ.**

ໃຫ້ຈັດຕັ້ງເຊື່ອມຊຶມເປັນແຕ່ລະຊຸດໆໄປ ບ່ອນໃດຈໍານວນຄົນຫຼາຍກໍແບ່ງຈັດເປັນຊຸດ. ແຕ່ການເຊື່ອມຊຶມໃນແຕ່ລະຄັ້ງແມ່ນ 1 ວັນ ຫຼື 1 ຄາບ.

**III. ວິທີການຈັດຕັ້ງປະຕິບັດ.**

1. ໃຫ້ຄະນະພັກ ກະຊວງ, ອົງການທຽບເທົ່າ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ເປັນເຈົ້າການນໍາພາ-ຊີ້ນໍາໂດຍກົງ ການຈັດຕັ້ງເຜີຍແຜ່, ເຊື່ອມຊຶມ ແລະ ກໍາແໜ້ນ ມະຕິສະບັບນີ້ ໃຫ້ເລິກເຊິ່ງ, ທົ່ວເຖິງ ແລະ ຮັບປະກັນທຸກເປົ້າໝາຍ; ຕັ້ງໜ້າພັນຂະຫຍາຍໃຫ້ເປັນລະອຽດ, ເຂົ້າສູ່ຂະບວນວຽກງານຕົວຈິງ ແລະ ເປັນຮູບປະທໍາໂດຍໄວ ໂດຍສະເພາະແມ່ນເດັດດ່ຽວປັບປຸງ, ແກ້ໄຂຂໍ້ຄົງຄ້າງ ທີ່ກີດໜ່ວງ, ອັດຕັນ ໃຫ້ຕົກໄປໂດຍໄວ.

2. ຄະນະພັກແຕ່ລະຂັ້ນ ສືບຕໍ່ນໍາພາ-ຊີ້ນໍາບັນດາວຽກງານຕ່າງໆທີ່ຈໍາເປັນ, ຮີບດ່ວນ ຕາມຄວາມຮັບຜິດຊອບຂອງຕົນ ໃຫ້ແຂງແຮງ, ຕໍ່ເນື່ອງ ແລະ ມີຈຸດສຸມ ໃນການແກ້ໄຂບັນຫາຢູ່ແຕ່ລະບ່ອນ; ເພີ່ມທະວີການນໍາພາ-ຊີ້ນໍາ, ຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງພັນຂະຫຍາຍ ໃຫ້ເຂົ້າສູ່ລວງເລິກ ແລະ ມີການຫັນປ່ຽນຢ່າງຈະແຈ້ງ.

3. ຄະນະພັກແຕ່ລະຂັ້ນ ໃຫ້ເພີ່ມທະວີບັນດາມາດຕະການໃນການແກ້ໄຂບັນຫາຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນໃນຖັນແຖວພະນັກງານ, ສະມາຊິກພັກ ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ຫຼຸດໜ້ອຍຖອຍລົງ.

4. ໃຫ້ກົມອົບຮົມ, ກົມໂຄສະນາ ຂອງກະຊວງ, ອົງການທຽບເທົ່າ, ຄະນະໂຄສະນາອົບຮົມນະຄອນຫຼວງວຽງຈັນ, ຄະນະໂຄສະນາອົບຮົມບັນດາແຂວງ ຫຼື ພາກສ່ວນກ່ຽວຂ້ອງ ທີ່ເປັນເສນາທິການໃຫ້ຄະນະພັກຂັ້ນຕົນ ເປັນເຈົ້າການນໍາເອົາບັນດາເນື້ອໃນຈິດໃຈສໍາຄັນ ຂອງມະຕິສະບັບນີ້ ທີ່ຄະນະໂຄສະນາອົບຮົມສູນກາງພັກແນະນໍານັ້ນ ໄປຈັດຕັ້ງເຜີຍແຜ່, ເຊື່ອມຊຶມ ໃຫ້ສະມາຊິກພັກ, ພະນັກງານ ແລະ ປະຊາຊົນ, ຊັ້ນຄົນຕ່າງໆ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ຮັບຮູ້, ເຂົ້າໃຈ ຢ່າງທົ່ວເຖິງ ແລະ ເຂົ້າຮ່ວມປະຕິບັດໃຫ້ເປັນຂະບວນການກວ້າງຂວາງ.

5. ພາຍຫຼັງສໍາເລັດການຈັດຕັ້ງເຜີຍແຜ່, ເຊື່ອມຊຶມແລ້ວ ໃຫ້ລາຍງານໄປຍັງຄະນະໂຄສະນາອົບຮົມສູນກາງພັກ ຮັບຊາບ ເພື່ອລາຍງານຕໍ່ກົມການເມືອງ, ຄະນະເລຂາທິການສູນກາງພັກ ຮັບຊາບ ແລະ ມີທິດຊີ້ນໍາ.

ດັ່ງນັ້ນ, ຈຶ່ງແນະນໍາມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ.

**ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ**

ພັກປະຊາຊົນປະຕິວັດລາວ ຄະນະໂຄສະນາອົບຮົມສູນກາງພັກ

**ຄໍາພັນ ເຜີຍຍະວົງ**